ສໍານັກງານໃຫຍ່

ເລກທີ: 004 /ທຄຕລ 2018
ນະຄອນຫຼວງວຽງຈັນ, ວັນທີ, 03 APR 2018

**ມະຕິ**
**ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ**
**ຄັ້ງທີ 2 ປະຈໍາປີ 2018, ວັນທີ 03/04/2018**

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝສາມັນ ຄັ້ງທີ 2 ປະຈໍາປີ 2018 ໄດ້ເປີດຂຶ້ນໃນເວລາ 13:30 ໂມງ ຂອງວັນທີ 03/04/2018 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ທີ່ສໍານັກງານໃຫຍ່ ທຄຕລ ໂດຍການເປັນປະທານຂອງ ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ, ມີສະມາຊິກສະພາບໍລິຫານ ແລະ ຜູ້ສັງເກດການເຂົ້າຮ່ວມຕາມລາຍຊື່ຊ້ອນທ້າຍ.

**ກອງປະຊຸມ ໄດ້ປຶກສາຫາລືບັນຫາຕ່າງໆພ້ອມທັງໄດ້ມີມະຕິຕົກລົງດັ່ງນີ້:**

1. ກອງປະຊຸມເຫັນດີໃຫ້ ທຄຕລ ເຮັດຈົດໝາຍວຽນໃນການສະເໜີຮັບຮອງຜົນການກວດສອບບັນຊີ ທຄຕລ ປະຈໍາປີ 2017 ມາດຖານ IFRS ແບບສັງລວມກິດຈະການ ແລະ ແບບແຍກກິດຈະການ ຫຼັງຜົນກວດສອບສໍາເລັດ.
2. ຮັບຮອງ ລາຍຊື່ສະມາຊິກສະພາບໍລິຫານຊຸດໃໝ່ ເພື່ອນໍາສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ.
3. ຮັບຮອງການປັບປຸງໂຄງສ້າງພະແນກສິນເຊື່ອແບບໃໝ່ ໂດຍນໍາໃຊ້ລະບົບ Loan Origination System, ລະບົບຈັດອັນດັບສິນເຊື່ອ Credit Rating ເພື່ອໃຫ້ສອດຄ່ອງກັບການປະຕິບັດຕາມຫຼັກການ Basel II.
4. ຮັບຮອງເນື້ອໃນບັດເຊີນ, ວາລະກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈໍາປີ 2017 ແລະ ກໍານົດມື້ເປີດກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈໍາປີ 2017 ໃນວັນທີ 27/04/2018.

ກອງປະຊຸມ ໄດ້ປິດລົງໃນເວລາ 15:15 ໂມງ ຂອງວັນດຽວກັນ.

**ປະທານສະພາບໍລິຫານ ທຄຕລ**

**ປອ. ບຸນເຫຼືອ ສິນໄຊວໍຣະວົງ**